**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ

ເລກທີ...໓໕໓./ຄຂສພ.ບກ

ບໍ່ແກ້ວ, ວັນທີ..16../09./2024.

# ແຈ້ງການ

**ເຖິງ:** ບັນດາບໍລິສັດ, ຫ້າງຮ້ານ, ບຸກຄົນ, ນິຕິບຸກຄົນ, ວິສາຫະກິດທີ່ໃຫ້ບໍລິການດ້ານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃນເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ **ທີ່ນັບຖື.**

**ເລື່ອງ:** ໃຫ້ຢຸດເຊົາການນໍາເຂົ້າ, ຈໍາໜ່າຍ ແລະ ຕິດຕັ້ງອຸປະກອນ ການສື່ສານຜ່ານດາວທຽມ (Starlink).

- ອີງຕາມ ດໍາລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະບັບເລກທີ 471/ລບ, ລົງວັນທີ 27 ທັນວາ 2019 ວ່າດ້ວຍການສື່ສານຜ່ານດາວທຽມ;
- ອີງຕາມ ດໍາລັດວ່າດ້ວຍ ເຂດເສດຖະກິດພິເສດ ສະບັບເລກທີ 188/ລບ; ລົງວັນທີ 7 ມິຖຸນາ 2018;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ, ສະບັບເລກທີ 1971/ກຜທ, ລົງວັນທີ 15 ສິງຫາ 2018 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງ ແລະ ນະຄອນຫຼວງ;
- ອີງຕາມ ໜັງສືສະເໜີ ຂອງຫ້ອງການ ເຕັກໂນໂລຊີ ແລະ ການສື່ສານເຂດ, ສະບັບເລກທີ 011, ລົງວັນທີ 04 ກັນຍາ 2024.

**ຄະນະຄຸ້ມຄອງ ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ** ຂໍອອກແຈ້ງການມາຍັງບັນດາທ່ານຊາບ: ເພື່ອເປັນການສືບຕໍ່ຈັດຕັ້ງປະຕິບັດກ່ຽວກັບການດໍາເນີນກິດຈະການ ດ້ານໂທລະຄົມມະນາຄົມ ຢູ່ໃນເຂດເສດຖະກິດພິເສດ ສາມຫຼ່ຽມຄໍາ ໃຫ້ປະຕິບັດຖືກຕ້ອງຕາມລະບຽບກົດໝາຍ ທີ່ວາງອອກ, ຈຶ່ງແຈ້ງມາຍັງ ບັນດາບໍລິສັດ, ຫ້າງຮ້ານ, ບຸກຄົນ, ນິຕິບຸກຄົນ, ວິສາຫະກິດທີ່ໃຫ້ບໍລິການດ້ານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ປະຕິບັດດັ່ງນີ້:

1. ໃຫ້ບັນດາບໍລິສັດ, ຫ້າງຮ້ານ, ບຸກຄົນ, ນິຕິບຸກຄົນ, ວິສາຫະກິດທີ່ໃຫ້ບໍລິການດ້ານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ໃຫ້ຢຸດເຊົາການນໍາເຂົ້າ, ຈໍາໜ່າຍ ແລະ ຕິດຕັ້ງອຸປະກອນ ການສື່ສານຜ່ານດາວທຽມ (Starlink);
2. ໃຫ້ບັນດາຜູ້ຮັບຜິດຊອບຕຶກອາຄານໃຫ້ຄວາມຮ່ວມມື, ເພື່ອອໍານວຍຄວາມສະດວກທຸກຂັ້ນຕອນ ໃນການຈັດຕັ້ງປະຕິບັດວຽກງານ ຂອງທີມງານ ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານປະຈໍາເຂດ, ບັນດາບໍລິສັດ ໂທລະຄົມມະນາຄົມ ລາວ ສາຂາ ແຂວງ ແລະ ບໍລິສັດ ITS ກ່ຽວກັບການຮື້ຖອນ ແລະ ຍຶດອຸປະກອນ ການສື່ສານຜ່ານດາວທຽມ (Starlink), ຈາກຕ່າງປະເທດທີ່ຜິດກົດໝາຍ, ດໍາເນີນເກັບກໍາຂໍ້ມູນ ແລະ ກວດກາຄືນ ອຸປະກອນ ການສື່ສານຜ່ານດາວທຽມ ທີ່ໄດ້ລັກລອບນໍາເຂົ້າ, ຈໍາໜ່າຍ ແລະ ຕິດຕັ້ງອຸປະກອນກ່ອນໜ້ານີ້ ມອບອຸປະກອນທັງໝົດໃຫ້ທາງ ຫ້ອງການ ເຕັກໂນໂລຊີ ແລະ ການສື່ສານປະຈໍາເຂດ;
3. ບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນ, ຜູ້ໃຫ້ບໍລິການດ້ານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ມີຈຸດປະສົງໃນການດໍາເນີນກິດຈະການ ໂທລະຄົມມະນາຄົມ ແລະ ການສື່ສານ ແບບໄຮ້ສາຍ (ລວມທັງລະບົບ

2G, 3G, 4G,5G ແລະ ສັນຍານໂທລະສັບເຄື່ອນທີ່ ແລະ ອິນເຕີເນັດ, ຄື້ນຄວາມຖີ່ຕ່າງໆ ແລະ ວິທະຍຸກະຈາຍສຽງ) ໃນເຂດເສດຖະກິດພິເສດ ສາມຫຼ່ຽມຄຳ, ຕ້ອງໄດ້ຮັບການອະນຸຍາດດຳເນີນທຸລະກິດ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ສະພາບໍລິຫານເຂດ ເສດຖະກິດພິເສດ ສາມຫຼ່ຽມຄຳ ເສຍກ່ອນ;

4. ສຳລັບການຮື້ຖອນ, ຢຸດເຊົາການນຳໃຊ້ ແລະ ຈຳໜ່າຍອຸປະກອນ ການສື່ສານຜ່ານດາວທຽມ (Starlink) ດັ່ງກ່າວແມ່ນຈະໄດ້ເລີ່ມຈັດຕັ້ງປະຕິບັດ ແຕ່ວັນທີ 05-15 ກັນຍາ 2024 ໃຫ້ສຳເລັດຢ່າງເດັດຂາດ;
5. ຖ້າບັນດາບໍລິສັດ, ບຸກຄົນ, ນິຕິບຸກຄົນ, ຜູ້ໃຫ້ບໍລິການດ້ານ ໂທລະຄົມມະນາຄົມ ແລະ ອິນເຕີເນັດ ທີ່ນຳໃຊ້ ແລະ ຈຳໜ່າຍອຸປະກອນ ການສື່ສານຜ່ານດາວທຽມ (Starlink), ວິທະຍຸກະຈາຍສຽງ ແລະ ຄື້ນຄວາມຖີ່ຕ່າງໆ ທີ່ບໍ່ໄດ້ຮັບອະນຸຍາດ ຈາກກະຊວງ ເຕັກໂນໂລຊີ ແລະ ການສື່ສານ ແລະ ສະພາບໍລິຫານເຂດ ເສດຖະກິດພິເສດ ສາມຫຼ່ຽມຄຳ, ຈະໄດ້ປະຕິບັດຕາມມາດຕະການປັບໄໝ 120,000,000ກີບ - 150,000,000ກີບ/ເຄື່ອງ, ຖ້າຫາກກໍລະນີຝ່າຝືນລະບຽບການຈະໄດ້ຖືກດຳເນີນຄະດີທາງອາຍາຕາມລະບຽບກົດໝາຍ;
6. ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ລະບຽບການຄຸ້ມຄອງ ທີ່ກ່ຽວຂ້ອງຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ, ການເຄື່ອນໄຫວທຸລະກິດໂທລະຄົມມະນາຄົມ ທີ່ຜິດກົດໝາຍຈະຖືກສືບສວນ-ສອບສວນ ແລະ ລົງໂທດ ຕາມກົດໝາຍ, ຖ້າຫາກສະພາບການຮ້າຍແຮງຈົນກໍ່ໃຫ້ເກີດເປັນ ບັນຫາອາຊະຍາກຳ, ຈະໄດ້ສົ່ງມອບໃຫ້ອົງການຕຸລາການ ຂອງ ສປປ ລາວ ຫຼື ສປ ຈີນ ເພື່ອດຳເນີນຄະດີທາງອາຍາ ຕາມລະບຽບກົດໝາຍ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ດ້ວຍຄວາມນັບຖື**

**ຫົວໜ້າຄະນະຄຸ້ມຄອງ**

**ເຂດເສດຖະກິດພິເສດ ແຂວງບໍ່ແກ້ວ**

ກະຊວງແຜນການ ແລະ ການລົງທຶນ ຄະນະຄຸ້ມຄອງ ເຂດເສດຖະກິດ ພິເສດ ແຂວງບໍ່ແກ້ວ

ບຸນທອງ ແສງສີກອງ

Bounthong SENGSIKONG

老挝人民民主共和国

和平　独立　民主　统一　繁荣

计划投资部

国家经济特区管理促进办公室　　　　　　　　编号：753

博胶省经济特区管理办公室　　　　　　　　博胶，日期：2024.9.16

# 通知

**致：尊敬的金三角经济特区内各公司、商户、个人、法人、网络与电信服务企业家**

**事由：停止进口、销售和安装星链（Starlink）卫星通信设备的事宜。**

- 根据2019年12月27日政府下发的第471号文，关于老挝总理的政令。
- 根据2018年6月7日政府下发的第188号文，关于经济特区政令。
- 根据2018年8月15日计划投资部下发的第1971号文，关于市省经济特区管理办公室组织与活动的决定。
- 根据2024年9月4日特区科技与通信办公室下发的第011号申请。

博胶省经济特区管理办公室特通知各位知悉：为了继续组织落实关于金三角经济特区内电信行业的运营，使其遵守所制定的法律法规，特通知各公司、商户、个人、法人以及网络与电信服务企业家，具体实施如下：

1. 请各公司、商户、个人、法人、网络与电信服务企业家停止进口、销售和安装星链（Starlink）卫星通信设备。
2. 请各建筑大楼负责人共同合作，给予驻特区科技与通信办公室工作组在实施程序中提供方便。老挝电信公司省各分公司和ITS公司，将执行拆除和扣留使用外国非法“星链（Starlink）”卫星通信设备及以前走私进口、销售和安装的卫星通信设备。对于该项工作将进行信息收集和复查后交由驻特区科技与通信办公室处理。

3. 各公司、个人、法人、网络与电信服务商，有意在金三角经济特区内经营电信和无线通信（包括 2G、3G、4G、5G 和手机信号和网络、各种频率和广播电台），必须先获得科技与通信部和金三角经济特区委员会签发的经营许可证。
4. 对于卫星通信设备（Starlink）的拆除和停止使用工作，将于 2024 年 9 月 5 日至 15 日起严格按时完成落实工作。
5. 如各公司、个人、法人、网络与电信服务商使用和销售未经科技与通信部和金三角经济特区管委会允许的卫星通信设备（Starlink）、广播电台和发射各种频率时，将按照每台 120,000,000 基普至 150,000,000 基普的措施进行处罚。如有违法行为，将依法按照刑事案件进行处理。
6. 按照老挝总理的政令和科技与通信部的相关管理规定，将对电信非法经营活动进行审讯和依法惩处。如情节严重或构成犯罪行为的将移交老挝或中国司法机关依法按照刑事案件进行处理。

特此通知

博胶省经济特区管理办公室主任

本通・强西贡